ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

****** **** ******

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ສໍານັກງານ ຄຄຊ
ລາຍຮັບ ເລກທີ 1250
ວັນທີ 04 DEC 2015
ໂທລະສັບ 021 2...

ເລກທີ: 45/ທຫ

ນະຄອນຫຼວງວຽງຈັນ, ວັນທີ: 4 ທັນວາ 2015

## ລາຍງານການເຄື່ອນໄຫວປະຈໍາອາທິດ
## ທີ 02/11/2015 ຫາ 06/11/2015 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
## ຂອງທະນາຄານແຫ່ງ ສປປ ລາວ

### I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ວຽກງານວິຊາສະເພາະ

#### 1. ສະພາບເສດຖະກິດເງິນຕາສາກົນ

##### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີອ່ອນຄ່າລົງ ເມື່ອທຽບໃສ່ເງິນໂດລາສະຫະລັດ ພາຍຫຼັງຈໍານວນຜູ້ຂໍສະຫວັດດີການວ່າງງານຕໍ່ເນື່ອງຂອງ ສ. ອາເມລິກາ ຫຼຸດລົງເປັນ 2.114.000 ຄົນ ໃນອາທິດທີ 17/10/2015 ຈາກ 2.181.000 ຄົນໃນອາທິດຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 27/10/2015 | ອາທິດນີ້ 03/11/2015 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,1057 | 1,1010 | 0,42% |
| ໂດລາ/ເຢນ | 120,63 | 120,69 | -0,05% |
| ໂດລາ/ບາດ | 35,48 | 35,55 | -0,20% |
| ໂດລາ/ເປໂຊ | 46,66 | 46,81 | -0,32% |
| ໂດລາ/ຣູເປີຍ | 13.635,00 | 13.565,56 | 0,51% |
| ໂດລາ/ໂດລາສິງກະໂປ | 1,3919 | 1,3964 | -0,32% |
| ໂດລາ/ຢວນ | 6,3504 | 6,3361 | 0,23% |

1.2 <u>ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ</u>

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 5,93% ຈາກ 45,25 ໂດລາ/ບາເຣວ ມາເປັນ 47,93 ໂດລາ/ບາເຣວ ຍ້ອນຄວາມຕ້ອງການນ້ຳມັນຂອງສະຫະລັດເພີ່ມຂຶ້ນ ເຫັນໄດ້ຈາກຄັງສຳຮອງນ້ຳມັນແອັດຊັງຂອງສະຫະລັດຫຼຸດລົງຢ່າງຕໍ່ເນື່ອງ ເປັນ 1,13 ລ້ານບາເຣວໃນອາທິດທີ 23/10/2015 ຈາກຫຼຸດລົງ 1,51 ລ້ານບາເຣວໃນອາທິດຜ່ານມາ.

ລາຄາຄຳໃນຕະຫຼາດໂລກຫຼຸດລົງ 2,49% ຈາກ 1.164,24 ໂດລາ/ອອນ ມາເປັນ 1.135,28 ໂດລາ/ອອນ ຍ້ອນນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເອົາກຳໄລ ບວກກັບການແຂງຄ່າຂຶ້ນຂອງເງິນໂດລາສະຫະລັດໃນຕະຫຼາດສາກົນ.

2. <u>ສະພາບເສດຖະກິດເງິນຕາພາຍໃນ</u>

2.1 <u>ສະພາບອັດຕາແລກປ່ຽນພາຍໃນ</u>

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,07% ສຳລັບອັດຕາ ທຫກ ແລະ ແຂງຄ່າຂຶ້ນ 0,12% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,32% ສຳລັບອັດຕາ ທຫກ ແລະ ແຂງຄ່າຂຶ້ນ 0,15% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,80% ສຳລັບອັດຕາ ທຫກ ແລະ ອ່ອນຄ່າລົງ 1,06% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 7,26% ສຳລັບອັດຕາ ທຫກ ແລະ ແຂງຄ່າຂຶ້ນ 8,51% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 27/10/2015 | | | ອາທິດນີ້ 02/11/2015 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| <u>ອັດຕາທະຄານ</u>[1] | | | | | | | | | |
| ໂດລາ | 8.140,44 | 8.165,27 | 8.149,16 | 8.135,81 | 8.161,85 | 8.143,63 | 0,06% | 0,04% | 0,07% |
| ບາດ | 230,61 | 231,80 | 231,73 | 229,55 | 231,17 | 230,99 | 0,46% | 0,27% | 0,32% |
| <u>ອັດຕາຕະຫຼາດ</u> | | | | | | | | | |
| ໂດລາ | 8.162,13 | 8.252,13 | 8.207,13 | 8.152,82 | 8.242,13 | 8.197,48 | 0,11% | 0,12% | 0,12% |
| ບາດ | 231,41 | 233,00 | 232,20 | 231,36 | 232,37 | 231,86 | 0,02% | 0,27% | 0,15% |
| ຜິດດ່ຽງອັດຕາ ທຫກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,27% | 1,06% | 0,71% | 0,21% | 0,98% | 0,66% | | | |
| ບາດ | 0,35% | 0,52% | 0,20% | 0,79% | 0,52% | 0,38% | | | |

2.2 <u>ສະພາບຖານເງິນຕາ ແລະ ປະລິມານເງິນ M2</u>

- ຖານເງິນຕາ ປະຈຳອາທິດນີ້ເພີ່ມຂຶ້ນ 1,41% ທຽບໃສ່ວັນທີ 30/10/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 22,50%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,87% ເມື່ອທຽບໃສ່ວັນທີ 30/10/2015, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 20,11%.

2.3 <u>ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ</u>

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 02/11/2015) ເຫັນວ່າ ທຫກ ຊື້ໂດລາສຸດທິ 19,41 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 67,60 ລ້ານໂດລາ ແລະ ຂາຍໂດລາໄດ້ 48,19 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 1.274,13 ລ້ານບາດ (ໃນນີ້ ຊື້ບາດໄດ້ 281,42 ລ້ານບາດ ແລະ ຂາຍ

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທຫກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

ບາດໄດ້ 1.555,55 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາເພີ່ມຂຶ້ນ 10,82% ແລະ ເພີ່ມຂຶ້ນ 98,75% ສໍາລັບເງິນບາດ;

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈໍານວນ 1,16 ລ້ານໂດລາ ແລະ ເງິນບາດມີຈໍານວນ 22,00 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈໍານວນ 12,95 ລ້ານໂດລາ ແຕ່ຊື້ບາດສຸດທິ ຈໍານວນ 14 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຂາຍໂດລາໄດ້ສຸດທິ ຈໍານວນ 43,84 ລ້ານໂດລາ ແຕ່ຊື້ບາດໄດ້ສຸດທິ ຈໍານວນ 970,13 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 27/10/2015 | | ອາທິດທີ 02/11/2015 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1, ການຊື້ເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 14,31 | 84,38 | 15,30 | 199,59 | 6,90% | 136,55% |
| - ທ/ຄທຸລະກິດອື່ນໆ | 25,01 | 166,69 | 52,30 | 81,82 | 109,16% | -50,91% |
| ລວມຊື້: | **39,32** | **251,06** | **67,60** | **281,42** | **71,94%** | **12,09%** |
| 2, ການຂາຍເງິນຕາຕ່າງປະເທດ | | | | | | |
| - ທ/ຄທຸລະກິດລັດ | 12,15 | 112,08 | 13,61 | 95,51 | 12,00% | -14,78% |
| - ທ/ຄທຸລະກິດອື່ນໆ | 53,01 | 561,13 | 34,58 | 1.460,03 | -34,77% | 160,20% |
| ລວມຂາຍ: | **65,16** | **673,20** | **48,19** | **1.555,55** | **-26,05%** | **131,07%** |
| ຊື້-ຂາຍສຸດທິ ທທກ | **-25,85** | **-422,14** | **19,41** | **-1.274,13** | **-175,11%** | **201,82%** |
| ຜິດດ່ຽງ ຊື້-ຂາຍ | -65,74 | -168,14 | 28,72 | -452,76 | 944,24% | -284,54% |
| ມູນຄ່າການຊື້-ຂາຍ | **104,48** | **924,27** | **115,79** | **1.836,96** | **10,82%** | **98,75%** |
| 3, ຊື້-ຂາຍລະຫວ່າງ ທຫລ ກັບ ທທກ | | | | | | |
| - ທຫລ ຊື້ຈາກ ທທກ | 0,00 | 30,00 | 0,00 | 14,00 | | |
| - ທຫລ ຂາຍໃຫ້ ທທກ | 17,80 | 0,00 | 12,95 | 0,00 | | |
| ຊື້-ຂາຍສຸດທິ ທຫລ | **-17,80** | **30,00** | **-12,95** | **14,00** | | |
| 4, ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **1,63** | **34,50** | **1,16** | **22,00** | | |
| 5, ຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນ ອື່ນໆ (ກະຊວງການເງິນ, ຮ້ານແລກປ່ຽນ) | | | | | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,35 | 309,88 | 0,10 | 970,17 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 8,89 | 0,14 | 43,94 | 0,04 | | |
| ຊື້-ຂາຍສຸດທິ ທຫລ | **-8,53** | **309,74** | **-43,84** | **970,13** | | |

2.4 <u>ສະພາບອັດຕາເງິນເຟີ້</u>

ອັດຕາເງິນເຟີ້ ປະຈຳເດືອນ 11/2015 (ຕົວເລກຄາດຄະເນ) ຄາດວ່າຈະຢູ່ໃນລະດັບ 1,39% ເພີ່ມຂຶ້ນ 0,07% ຈາກ 1,32% ໃນເດືອນ 10/2015 ຍ້ອນຍ້ອນລາຄາໝາກໄມ້, ຜັກສົດ, ປະເພດອາຫານສຸກ ແລະ ໝວດທີ່ພັກອາໄສ ຄາດວ່າຈະມີທ່າອ່ຽງເພີ່ມສູງຂຶ້ນ ເນື່ອງຈາກເປັນໄລຍະຂອງການໃຊ້ຈ່າຍງານສະເຫຼີມສະຫຼອງບຸນປະເພນີຕ່າງໆ.

2.5 <u>ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ</u>

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 63,12 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງຫຼຸດລົງ 42,7% ທຽບໃສ່ອາທິດຜ່ານມາ.

2.6 <u>ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ</u>

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 850 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 55,10% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 531,27 ຕື້ກີບ ເພີ່ມຂຶ້ນ 50,59% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (23-29/10/2015) ມີຈຳນວນ 1.889 ຄັ້ງ ໂດຍມີມູນຄ່າ 415,30 ຕື້ກີບ ເພີ່ມຂຶ້ນ 16% ຊຶ່ງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 492 ຄັ້ງ.

2.7 <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ ປິດຢູ່ທີ່ 1.243,56 ຈຸດ ຫຼຸດລົງ 0,57% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 407.888 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,49 ຕື້ກີບ ເພີ່ມຂຶ້ນ 309,37% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 70,52% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.686 ກີບ/ຮຸ້ນ ຫຼຸດລົງ 36 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 55.468 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 315,37 ລ້ານກີບ ເພີ່ມຂຶ້ນ 728,07% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 71,81% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,79%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 6.199 ກີບ/ຮຸ້ນ ຫຼຸດລົງ 25 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 351.663 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,18 ຕື້ກີບ ເພີ່ມຂຶ້ນ 429,70% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 68,18% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,82%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດທີ່ 7.700 ກີບ/ຮຸ້ນ ຫຼຸດລົງ 6 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 10 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 77.000 ກີບ, ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນພາຍໃນປະເທດ, ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[4].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 3.000 ກີບ/ຮຸ້ນ ເພີ່ມຂຶ້ນ 1 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 747 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,24 ລ້ານກີບ ຫຼຸດລົງ 98,53%. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດສະເລ່ຍກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 12,67%[5].

---

[2] ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%;

[3] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[4] ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 20%;

[5] ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ສຳເລັດການຖອດຖອນບົດຮຽນ ໃນຫົວຂໍ້: "ວຽກງານ IT ໃນການເກັບກຳສະຖິຕິຂໍ້ມູນການເງິນ" ທີ່ປະເທດໄທ;
- ສຳເລັດການຄົ້ນຄວ້າວິທີເຊື່ອມຕໍ່ເຊີບເວີ SQL SRV ໂດຍ PHP PDO ອັບໂຫລດຂໍ້ມູນຈາກ File Excell ເຂົ້າໄປໃນເຊີບເວີ;
- ສຳເລັດການເຂົ້າຮ່ວມປະຊຸມ ແລະ ສຳມະນາ: ❶ປະຊຸມກັບ BCEL LDB ແລະ ບໍລິສັດ Microtec ກ່ຽວກັບການປັບປຸງລະບົບໃຫ້ສາມາດສື່ສານກັບ LAPS ແລະ ສຳເລັດການເຂົ້າຮ່ວມປະຊຸມສະຫຼຸບຜົນການເຮັດທົດລອງລະບົບ LAPS ຫຼື UAT ລະຫວ່າງ ທຫລ ແລະ ຝ່າຍຈີນ; ❷ສຳມະນາ ໃນຫົວຂໍ້: "ການສ້າງຄວາມອາດສາມາດກ່ຽວກັບໂຄງສ້າງຂອງຕະຫຼາດເງິນ" ຢູ່ປະເທດ ສ. ເກົາຫຼີ, ❸ກອງປະຊຸມປຶກສາຫາລື ເພື່ອຄົ້ນຄວ້າຮູບແບບ ແລະ ເຈ້ຍອອກໃບອະນຸຍາດສ້າງຕັ້ງຊື່ວຄາວ ແລະ ຖາວອນ ໃນການດຳເນີນທຸລະກິດກ່ຽວກັບທະນາຄານ, ສະຖາບັນການເງິນ, ຮ້ານແລກປ່ຽນເງິນຕາ ແລະ ບໍລິສັດຊື້-ຂາຍຄຳ ທີ່ ທຫລ, ❹ກອງປະຊຸມປຶກສາຫາລືການຂໍສັດຕະຍາບັນໃຫ້ແກ່ສົນທິສັນຍາວ່າດ້ວຍ: ການຍົກສະຖານະຫ້ອງການຕິດຕາມກວດກາສະພາບເສດຖະກິດມະຫາພາກອາຊຽນ+3 ໃຫ້ເປັນອົງການຈັດຕັ້ງສາກົນ (Agreement Establishing ASEAN+3 Macro-economic Research office "AMRO" ທີ່ສະພາແຫ່ງຊາດ;
- ສຳເລັດການຕ້ອນຮັບ: ❶ຕ້ອນຮັບຄະນະຈາກທະນາຄານກາງປະເທດເຢຍລະມັນ ທີ່ເດີນທາງມາຈັດກອງປະຊຸມສຳມະນາ ໃນຫົວຂໍ້: "Payment system" ທີ່ ສປປລາວ ແລະ ❷ຕ້ອນຮັບ ແລະ ເຮັດວຽກລະຫວ່າງ ຄະນະຮັບຜິດຊອບວຽກງານຊຳລະສະສາງແຫ່ງຊາດ ແລະ ທີມງານຊ່ຽວຊານຈາກສະຖາບັນການເງິນສາກົນ (IFC) ກ່ຽວກັບລະບົບຊຳລະສະສາງແຫ່ງຊາດ;
- ສຳເລັດການເຜີຍແຜ່ກົດໝາຍ ວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ນິຕິກຳທີ່ກ່ຽວຂ້ອງກັບວຽກງານ AML/CFT ຢູ່ 8 ແຂວງພາກເໜືອ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາລະຫວ່າງທະນາຄານ;
- ສືບຕໍ່ພິມທະນະບັດງວດ 5 ປະເພດໃບ 2.000 ກີບໃໝ່ ງວດ 5 ຊຸດ 2 ຈຳນວນ 30 ລ້ານໃບ;
- ສືບຕໍ່ຄົ້ນຄວ້າ: ❶ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ, ❷ຄົ້ນຄວ້າລະບຽບກ່ຽວກັບການປັບໃໝ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ລະເມີດກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນ ການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ, ❸ສືບຕໍ່ຄົ້ນຄວ້າໂຄງສ້າງຂອງຮ່າງດຳລັດ ວ່າດ້ວຍການເຄື່ອນໄຫວວຽກງານຂໍ້ມູນສິນເຊື່ອ;
- ສືບຕໍ່ປະຕິບັດເງື່ອນໄຂ PRSO 8-11 (ປີ2012-2015);
- ສືບຕໍ່ການຈັດຕັ້ງປະຕິບັດການປະເມີນຜົນການປະຕິບັດວຽກງານຂອງລັດຖະບານ ທຫລ ປະຈຳປີ 2015 ທີ່ ທຫລ;
- ສືບຕໍ່ການຝຶກຊ້ອມໃຫ້ພ້ອມພຽງກັນຂອງກ້ອນກຳລັງ ທີ່ເດີນທາດຫຼວງ ເພື່ອກະກຽມໃນພິທີສະເຫຼີມສະຫຼອງ 2 ວັນປະຫວັດສາດປີ 2015 ໃນວັນທີ 2 ທັນວາ 2015.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ພອສີ ປົມມະກອນ